## ມິຊຊາອາທິດທີ 3 ກຳນົດພຣະກຣິສຕະຄົມ ປີ A

## ວັນທີ 15 ທັນວາ 2019



**ພຣະວໍລະສານໂດຍນັກບຸນມັດເທວ 11, 2-11**

ໃນເວລານັ້ນ, ຍວງບັບຕິສຕາຢູ່ໃນຄຸກໄດ້ຍິນເວົ້າເຖິງກິດຈະການຂອງພຣະກຣິສໂຕເຈົ້າ, ເລີຍໃຊ້ລູກສິດສອງຄົນໄປທູນຖາມພຣະອົງວ່າ: ທ່ານຄືຜູ້ທີ່ຈະມານັ້ນບໍ ຫລືຈະໃຫ້ພວກເຮົາຄອງຖ້າຄົນອື່ນອີກ? ພຣະເຢຊູເຈົ້າກ່າວຕອບວ່າ: ຈົ່ງໄປບອກຍວງບັບຕິສຕາເຖິງສິ່ງທີ່ພວກເຈົ້າໄດ້ຍິນແລະໄດ້ເຫັນ: ຄົນຕາບອດເຫັນຮຸ່ງ, ຄົນເປ້ຍຍ່າງໄດ້, ຄົນຂີ້ທູດສະອາດບໍລິສຸດ, ຄົນຫູໜວກໄດ້ຍິນ, ຄົນຕາຍກັບເປັນຄືນມາ, ຄົນທຸກຈົນໄດ້ຮັບຂ່າວປະເສີດ. ບຸນລາບແກ່ຜູ້ທີ່ບໍ່ຖືເອົາເຮົາເປັນສະດຸດ.

ໃນເວລາລູກສິດຂອງຍວງກຳລັງເດີນທາງກັບ, ພຣະເຢຊູເຈົ້າເລີຍກ່າວກັບຝູງຊົນເຖິງຍວງວ່າ: ພວກທ່ານໄປເບິ່ງຫຍັງຢູ່ທີ່ປ່ຽວ? ໄປເບິ່ງກົກເລົາທີ່ເໜັງຕີງໄປມາຕາມລົມບໍ? ດັ່ງນັ້ນພວກທ່ານໄປເບິ່ງຫຍັງ? ໄປເບິ່ງຄົນນຸ່ງຫົ່ມເສື້ອຜ້າອອ່ນນວມຈົບງາມບໍ? ຄົນນຸ່ງຫົ່ມເສື້ອຜ້າອອ່ນນວມຈົບງາມກໍມີຢູ່ແຕ່ໃນລາດຊະວັງ. ແຕ່ວ່າພວກທ່ານໄປເບິ່ງຫຍັງແທ້? ໄປເບິ່ງປະພາສົກບໍ? ແມ່ນແລ້ວ ແລະຍັງຍິ່ງກວ່າປະພາສົກອີກດ້ວຍ. ຍ້ອນພຣະຄຳພີໄດ້ກ່າວເຖິງທ່ານຜູ້ນັ້ນວ່າ: ນັ້ນເດ, ເຮົາສົ່ງຜູ້ຖືສານຂອງເຮົາໄປຕຽມທາງໄວ້ລ່ວງໜ້າທ່ານ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ໃນບັນດາຜູ້ທີ່ເກີດຈາກຜູ້ຍິງ ບໍ່ມີໃຜຍິ່ງໃຫຍ່ກວ່າຍວງບັບຕິສຕາ. ແຕ່ຜູ້ທີ່ຕ່ຳນ້ອຍທີ່ສຸດໃນອານາຈັກສະຫວັນ ຜູ້ນັ້ນຍັງໃຫຍ່ກວ່າຍວງບັບຕິສຕານັ້ນອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 11, 2-11**

ເມື່ອກ້າວເຂົ້າສູ່ອາທິດທີໜຶ່ງກຳນົດພຣະກຣິສຕະຄົມ ພຣະກຣິສຕະຈັກກໍເຊື້ອເຊີນພວກເຮົາໃຫ້ຕື່ນເຝົ້າແລະຕຽມພ້ອມຢູ່ສະເໝີ ເພື່ອຕ້ອນຮັບການສະເດັດກັບມາອີກຄັ້ງໜຶ່ງຂອງອົງພຣະຜູ້ກູ້ໄຖ່.

ແລະວັນອາທິດທີ່ຜ່ານມາ, ວາຈາພຣະເຈົ້າກໍອະທິບາຍໃຫ້ພວກເຮົາເຂົ້າໃຈເຖິງສິ່ງທີ່ຕ້ອງກະທຳໃນການກຽມພ້ອມແລະຕື່ນເຝົ້າ ອັນແມ່ນການຊຳລະຈິດໃຈໃຫ້ບໍລິສຸດ ເພື່ອດວງໃຈຂອງພວກເຮົາຈະໄດ້ເປັນບ່ອນທີ່ພຣະເຢຊູ ອົງແອມມານູແອນຈະໄດ້ສະເດັດລົງມາເກີດໃນວັນບຸນໂອແອນທີ່ຈະມາເຖິງແລະຢູ່ນຳພວກເຮົາຕະຫລອດໄປ.

ສ່ວນວັນອາທິດນີ້ພຣະກຣິສຕະຈັກຮຽກວ່າ: ອາທິດແຫ່ງຄວາມຊື່ນຊົມຍິນດີ. ຍ້ອນວາຈາພຣະເຈົ້າບໍ່ພຽງແຕ່ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຈຸດປະສົງຂອງຜູ້ທີ່ຈະສະເດັດມາເທົ່ານັ້ນ ແຕ່ຍັງຊ່ວຍພວກເຮົາໃຫ້ມີຄວາມຫວັງແລະຄວາມຍິນດີໃນການສະເດັດກັບມາອີກຄັ້ງໜຶ່ງຂອງພຣະຜູ້ກູ້ໄຖ່ຂອງພວກເຮົາ.ເພາະພຣະອົງມາບໍ່ແມ່ນເພື່ອຕັດສິນ ແຕ່ເພື່ອຊ່ວຍມະນຸດໃຫ້ຣອດ. ພຣະອົງມາບໍ່ແມ່ນເພື່ອລົງໂທດມະນຸດ ແຕ່ເພື່ອໃຫ້ທຸກຄົນທີ່ເຊື່ອໃນພຣະອົງໄດ້ຫລຸດພົ້ນຈາກແອກຂອງບາບ. ແລະເປັນຕົ້ນພຣະອົງມາເພື່ອໃຫ້ຜູ້ທີ່ຢູ່ຊາຍຂອບສັງຄົມໄດ້ເຂົ້າມາມີສ່ວນຮ່ວມໃນການເປັນລູກຂອງພຣະອົງ.

ສິ່ງທີ່ກ່າວມານີ້ ພວກເຮົາສາມາດເຫັນໄດ້ໃນວາຈາພຣະເຈົ້າວັນນີ້. ເມື່ອຢວງບັບຕິສຕາຢູ່ໃນຄຸກແລະໄດ້ຍິນເຖິງສິ່ງທີ່ພຣະເຢຊູເຈົ້າກະທຳ, ທ່ານຈຶ່ງສົ່ງລູກສິດຂອງຕົນໄປຖາມພຣະເຢຊູເຈົ້າວ່າ ພຣະອົງແມ່ນຜູ້ທີ່ຈະມານັ້ນບໍ ຫລືໃຫ້ພວກເຮົາລໍຖ້າຄົນອື່ນອີກ? ແທນທີ່ພຣະເຢຊູເຈົ້າຈະຕອບລູກສິດຂອງທ່ານຢວງວ່າ: ແມ່ນຫລືບໍ່. ພຣະອົງພັດໃຫ້ເຂົາເບິ່ງໃນສິ່ງທີ່ພຣະອົງກະທຳນັ້ນຄື: ຄົນຕາບອດເຫັນຮຸ່ງ, ຄົນເປ້ຍຍ່າງໄດ້, ຄົນຂີ້ທູດສະອາດບໍລິສຸດ, ຄົນຫູໜວກໄດ້ຍິນ, ຄົນຕາຍກັບເປັນຄືນມາ. ຫລືເວົ້າອີກຢ່າງພຣະອົງຄືພຣະຜູ້ກູ້ໄຖ່ນັ້ນເອງ. ດ້ວຍເຫດນີ້, ການສະເດັດມາຂອງພຣະເຢຊູເຈົ້າຈຶ່ງເປັນຄວາມຫວັງແລະຄວາມຍິນດີສຳລັບຊົນຊາດອິສຣາແອນກໍຄືສຳລັບມະນຸດທຸກຄົນ.

ດັ່ງນັ້ນໃນວັນອາທິດແຫ່ງຄວາມຊື່ນຊົມຍິນດີນີ້, ວາຈາພຣະເຈົ້າຈຶ່ງເຊື້ອເຊີນພວກເຮົາໃຫ້ຖາມຕົວເອງວ່າ: ສິ່ງທີ່ທຳໃຫ້ຊີວິດຄວາມເຊື່ອຂ້ອຍຕາບອດ, ເປັນເປ້ຍ, ເປັນຂີ້ທູດ, ຫູໜວກ ແລະຕາຍໄປນັ້ນແມ່ນຫຍັງ? ຂ້ອຍຕ້ອງການໃຫ້ພຣະເຢຊູເຈົ້າສະເດັດມາເພື່ອປິ່ນປົວພະຍາດເຫລົ່ານີ້ໃນຊີວິດຂ້ອຍບໍ? ແລະຂ້ອຍພ້ອມແລ້ວບໍເພື່ອໃຫ້ພຣະອົງປິ່ນປົວ?

ຍັງອີກອາທິດກວ່າເທົ່ານັ້ນທີ່ພຣະບຸດພຣະເຈົ້າ, ພຣະຜູ້ກູ້ໄຖ່, ອົງແອມມານູແອນຈະລົງມາບັງເກີດໃນວັນບຸນໂນແອນທີ່ຈະມາເຖິງ. ຂໍໃຫ້ບຸນໂນແອນປີນີ້ເປັນວັນບຸນທີ່ມີຄວາມໝາຍສຳລັບພວກເຮົາແຕ່ລະຄົນ, ຍ້ອນພຣະຜູ້ກູ້ໄຖ່ໄດ້ລົງມາບໍ່ພຽງແຕ່ຢູ່ນຳພວກເຮົາ ແຕ່ພຣະອົງມາເພື່ອປິ່ນປົວພວກເຮົາໃຫ້ອອກຈາກສິ່ງທີ່ທຳໃຫ້ພວກເຮົາຕັດຂາດຈາກພຣະອົງ ເພື່ອໃຫ້ພວກເຮົາໄດ້ກັບມາຄືນດີກັບພຣະອົງນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ